# ໃບບັນທຶກການຄົ້ນຄວ້າຕະຫຼາດແຮງງານ

**ຊື່::** ______________________________ **ສະມາຊິກ ID#:** __________________ **ວັນທີ:** __________

**<u>ເປົ້າໝາຍ</u>:** ການຄົ້ນຄວ້າຕະຫຼາດແຮງງານເປັນເຄື່ອງມືທີ່ຊ່ວຍທ່ານຕັດສິນໃຈກ່ຽວກັບການຊອກວຽກຂອງທ່ານ. ດັ່ງທີ່ໄດ້ສົນທະນາກັນໃນເວລາໄປຟັງຄຳອະທິບາຍນັ້ນ, ການຄົ້ນຄວ້າດ້ານນີ້ມີຄວາມສຳຄັນຍິ່ງຕໍ່ຄວາມເຂົ້າໃຈກ່ຽວກັບຜູ້ຈ້າງແຮງງານທີ່ກຳລັງຊອກຫາສີມືແຮງງານຂອງທ່ານ. ການປະກອບໃບບັນທຶກນີ້ໃຫ້ຄົບຖ້ວນຈະຊ່ວຍທ່ານຕັດສິນໃຈໃນການຊອກວຽກກ່ຽວກັບສີມືແຮງງານແລະອາຊີບຂອງທ່ານໃນປັດຈຸບັນ.

**<u>ຂໍ້ກຳນົດ:</u>**

ຂໍ້ກຳນົດໜຶ່ງໃນການຊອກວຽກທີ່ທ່ານຕ້ອງປະຕິບັດຕາມກໍຄືທ່ານຕ້ອງໄດ້ດຳເນີນການຄົ້ນຄວ້າຕະຫຼາດແຮງງານກ່ຽວກັບວຽກອາຊີບຂອງທ່ານໃນປັດຈຸບັນ.
ກະລຸນາປະກອບໃບບັນທຶກການຄົ້ນຄວ້າຕະຫຼາດແຮງງານອັນນີ້ແລ້ວໃຫ້ຖືມານຳໃນເວລາມີການນັດພົບກັບພະນັກງານໂຄງການປະເມີນຜົນມີສິດເຮັດວຽກຄືນໃໝ່ REA ເພື່ອການທົບທວນ ຫຼືໃນເວລານັດພົບກັບຜູ້ປຶກສາດ້ານວິຊາຊີບ.

**<u>ແຫລ່ງຂໍ້ມູນ</u>:**

ມີຫຼາຍເວັບໄຊທີ່ທ່ານສາມາດນຳໃຊ້ເພື່ອຊອກຫາຂໍ້ມູນຕະຫຼາດແຮງງານທີ່ກ່ຽວຂ້ອງກັບວຽກອາຊີບຂອງທ່ານ.
ຂ້າງລຸ່ມແມ່ນບາງເວັບໄຊທີ່ທ່ານສາມາດເຂົ້າຊົມໃນການຊອກຫາຂໍ້ມູນ.
ເວລາປະກອບໃບບັນທຶກການຄົ້ນຄວ້າຕະຫຼາດແຮງງານນີ້, ກະລຸນາໝາຍກາເອົາທຸກເວັບໄຊທີ່ທ່ານເຂົ້າຊົມຫຼືນຳໃຊ້ (ກຳນົດໃຫ້ເຂົ້າຊົມແຕ່ເວັບໄຊດຽວແຕ່ທ່ານສາມາດເຂົ້າຊົມແລະໝາຍກາເອົາໄດ້ໝົດທຸກເວັບໄຊ).
ນຳເອົາຂໍ້ມູນທີ່ທ່ານຄົ້ນພົບຈາກເວັບໄຊນັ້ນມາຕອບຄຳຖາມໃນໃບບັນທຶກການຄົ້ນຄວ້າຕະຫຼາດແຮງງານນີ້ (ດ້ານໜ້າແລະຫລັງ) ຫຼືພິມແລະນຳເອົາຂໍ້ມູນທີ່ທ່ານຄົ້ນພົບຢູ່ໃນເວັບໄຊທີ່ກ່ຽວກັບວຽກອາຊີບຂອງທ່ານນັ້ນມາ.

**<u>ເວັບໄຊ</u>:**

☐ ລະບົບຂໍ້ມູນດ້ານວິຊາຊີບແຫ່ງລັດແມສ:
ຊື່ເຂົ້າລະບົບ(username): **ສູນວິຊາຊີບຂອງທ່ານ** ລະຫັດ (password): **ສູນວິຊາຊີບຂອງທ່ານ**
masscis.intocareers.org

☐ ໂອ*ແນັດ O*Net: onetonline.org

☐ ເຄືອຂ່າຍຂໍ້ມູນວິຊາຊີບຂອງອະເມຣິກາ: acinet.org/occ_intro.asp

☐ ສຳນັກງານສະຖິຕິແລະແຮງງານຂອງສະຫະລັດອະເມຣິກາ- **ກົດໃສ່ປຸ່ມ Publications ຢູ່ຂ້າງເທິງຂອງໜ້າທຳອິດ, ແລ້ວກົດເອົາ Occupational Outlook Handbook** bls.gov/

☐ ສີມືແຮງງານຂອງຂ້ອຍແລະອະນາຄົດຂອງຂ້ອຍ: myskillsmyfuture.org/

☐ ສິ່ງທີ່ຂ້ອຍຈະເຮັດຕໍ່ໄປ: mynextmove.org

☐ TORQ: ໃຫ້ພົບພະນັກງານເພື່ອຂໍອະນຸຍາດເຂົ້າຊົມໃຊ້

☐ ເວັບໄຊອື່ນໆ: ________________________________________________

☐ ແຫຼ່ງຂໍ້ມູນອື່ນໆ: ການຝຶກອົບຮົມການຄົ້ນຄວ້າວິຊາຊີບ, ການປະກາດຮັບສະໝັກງານ, ວາລະສານວິຊາຊີບ, ຂໍ້ມູນຈາກການສຳພາດ, ໜັງສືພິມ ແລະ ເຄືອຂ່າຍ.

# ໃບບັນທຶກການຄົ້ນຄວ້າຕະຫຼາດແຮງງານ

<u>ຕອບຄຳຖາມໃສ່ຂ້າງລຸ່ມຕາມຂໍ້ມູນການຄົ້ນຄວ້າຕະຫຼາດແຮງງານຂອງທ່ານ</u>.

1. **ຕຳແໜ່ງອາຊີບຫຼັກ** (ກະລຸນາສັງເກດທຸກຕຳແໜ່ງອາຊີບທີ່ລະບຸໄວ້ໃນເວັບໄຊເຫຼົ້ານີ້; ໃຫ້ເລືອກເອົາຕຳແໜ່ງອາຊີບທີ່ໃກ້ສິດທີ່ສຸດກັບອາຊີບຂອງທ່ານ).

2. **ລະດັບເງິນເດືອນເທົ່າໃດ** (ຖ້າບໍ່ມີລະດັບ ໃຫ້ລະບຸບອກ**ຂະໜາດປານກາງ**)?

   **$________________ ຫາ $ ________________ ຕໍ່ຊົ່ວໂມງ☐ ຫຼື ຕໍ່ປີ ☐** (ໝາຍເອົາອັນໜຶ່ງ).

3. **ການປະກາດຮັບຈ້າງແຮງງານໃນອາຊີບນີ້** (ໃນລັດທີ່ທ່ານກຳລັງຊອກວຽກເຮັດ):

   **ກຳລັງເພີ່ມຂຶ້ນ ☐ ຫຼື ☐ ຫຼຸດລົງ** (ໝາຍເອົາອັນໜຶ່ງ)?
   (ຂໍ້ມູນນີ້ສາມາດຄົ້ນພົບຢູ່ໃນບ່ອນທີ່ໝາຍບອກວ່າ employment outlook/employment trends/job outlook-ຖ້າຈຳນວນຕົວເລກບໍ່ມີກາໝາຍລົບທາງໜ້າ - ກໍແປວ່າອາຊີບນີ້ກຳລັງເພີ່ມຂຶ້ນ):

**3a. ປະມານຈັກເປີເຊັນ** (ຈຳນວນທີ່ຄົ້ນພົບຈາກ employment outlook/employment trends/job outlook)?
______________**%**

4. **ແຕ່ລະປີມີການຮັບຈ້າງວຽກງານແບບວຽກອາຊີບຂອງທ່ານຫຼາຍປານໃດ**
   **(**ຂໍ້ມູນນີ້ສາມາດຄົ້ນພົບຢູ່ບ່ອນດຽວກັບຄຳຖາມຂໍ້ 3**)**?

   ______________

5. **ອີງໃສ່ການຄົ້ນຄວ້າຂອງທ່ານ, ທ່ານມີໃບປະກາດ, ໃບອະນຸຍາດ, ຫຼືໃບຮັບຮອງຄຸນວຸດທິສຳລັບວຽກອາຊີບນີ້ບໍ່?:**
   **<u>ມີ</u> ☐ <u>ບໍ່ມີ</u> ☐** (ໝາຍເອົາອັນໜຶ່ງ)

**5a. ຖ້າທ່ານຕອບວ່າ <u>ບໍ່ມີ</u> ໃນຄຳຖາມຂໍ້ 5,** ມີໃບປະກາດ, ໃບອະນຸຍາດ, ຫຼືໃບຮັບຮອງຄຸນວຸດທິສຳລັບວຽກອາຊີບປະເພດໃດທີ່ທ່ານຂາດທີ່ເຮັດໃຫ້ທ່ານບໍ່ໄດ້ເຮັດວຽກໃນອາຊີບນີ້ຄືນ?

6. **ທ່ານຄິດວ່າເປັນຍ້ອນສາເຫດໃດທີ່ທ່ານຍັງບໍ່ສາມາດໄດ້ເຮັດວຽກໃນອາຊີບຂອງທ່ານຄືນຄືເກົ່າ?**

7. **ຂໍ້ມູນຕະຫຼາດແຮງງານອື່ນໆທີ່ກ່ຽວຂ້ອງກັບວຽກອາຊີບຂອງທ່ານ.**